ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**********************

ສໍານັກງານນາຍົກລັດຖະມົນຕີ ເລກທີ141/ນຍ

ນະຄອນຫຼວງວຽງຈັນ, ວັນທີ24/09/2009

# ຂໍ້ຕົກລົງ

## ວ່າດ້ວຍການເພີ່ມທຶນຈົດທະບຽນຕໍ່າສຸດຂອງທະນາຄານທຸລະກິດ ແລະ ເງິນລົງທຶນຕໍ່າສຸດຂອງສາຂາທະນາຄານທຸລະກິດຕ່າງປະເທດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງໃສ່ຄວາມຕ້ອງການຂອງ ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ທີ່ນັບມື້ນັບຂະຫຍາຍຕົວ ແລະ ການຄົ້ນຄ້ວານໍາສະເໜີຂອງທະນາຄານ ແຫ່ງ ສປປ ລາວ.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕົກລົງ:

ມາດຕາ 1. ໃຫ້ທະນາຄານທຸລະກິດ ເພີ່ມທຶນຈົດທະບຽນຕໍ່າສຸດ ຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006 ຈາກຈໍານວນ 100 ຕື້ກີບ ມາເປັນ 300 ຕື້ກີບ;

ສໍາລັບສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ເພີ່ມເງິນລົງທຶນຕໍ່າສຸດ ຈາກຈໍານວນ 50 ຕື້ກີບ ມາເປັນ 100 ຕື້ກີບ.

ມາດຕາ 2. ການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຕໍ່າສຸດ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ປະຕິບັດດັ່ງນີ້:

1. ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງກ່ອນອອກຂໍ້ຕົກລົງສະບັບນີ້ ຕ້ອງດໍາເນີນການເພີ່ມທຶນຈົດທະບຽນຕໍ່າສຸດໃຫ້ຄົບຖ້ວນ ພາຍໃນກໍານົດ 5 ປີ, ແຕ່ປີ 2010

ເຖິງ ປີ 2014. ການເພີ່ມທຶນຈົດທະບຽນຕ່ຳສຸດໃນແຕ່ລະປີບໍ່ໃຫ້ຫຼຸດ 10% ຂອງທຶນຈົດທະບຽນທີ່ຕ້ອງເພີ່ມທັງໝົດ ແຕ່ຕ້ອງເພີ່ມໃຫ້ຄົບຖ້ວນ 100% ພາຍໃນກຳນົດເວລາດັ່ງກ່າວ.

2. ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງກ່ອນອອກຂໍ້ຕົກລົງສະບັບນີ້ ຕ້ອງໄດ້ດຳເນີນການເພີ່ມເງິນລົງທຶນຕ່ຳສຸດໃຫ້ຄົບຖ້ວນ ພາຍໃນກຳນົດ 3 ປີ, ແຕ່ ປີ 2010 ເຖິງປີ 2012. ການເພີ່ມເງິນລົງທຶນຕ່ຳສຸດໃນແຕ່ລະປີບໍ່ໃຫ້ຫຼຸດ 20% ຂອງເງິນລົງທຶນທີ່ຕ້ອງເພີ່ມທັງໝົດ ແຕ່ຕ້ອງເພີ່ມໃຫ້ຄົບຖ້ວນ 100% ພາຍໃນກຳນົດເວລາ ດັ່ງກ່າວ.

**ມາດຕາ 3.** ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງສ້າງແຜນການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຕ່ຳສຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 1 ແລະ ມາດຕາ 2 ຂ້າງເທິງນີ້ ໂດຍໄດ້ຮັບການຮັບຮອງຈາກຜູ້ທີ່ມີສິດອຳນາດຂອງທະນາຄານທຸລະກິດ ແລະ ສຳນັກງານໃຫຍ່ຂອງສາຂາທະນາຄານທຸລະກິດຕ່າງປະເທດ.

**ມາດຕາ 4.** ທຶນຈົດທະບຽນ ແລະ ເງິນລົງທຶນຕ່ຳສຸດ ທີ່ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ໂອນເຂົ້າບັນຊີຂອງຕົນທີ່ເປີດໄວ້ຢູ່ ທະນາຄານ ແຫ່ງ ສປປ ລາວ, ໃຫ້ທະນາຄານ ແຫ່ງ ສປປ ລາວ ດຳເນີນການແລກປ່ຽນເປັນສະກຸນກີບ ນັບແຕ່ມື້ທີ່ເງິນຈຳນວນດັ່ງກ່າວໄດ້ໂອນເຂົ້າບັນຊີ ໂດຍຖືເອົາອັດຕາແລກປ່ຽນປະຈຳວັນຂອງຕະຫຼາດ ຊື້-ຂາຍ ເງິນຕາຕ່າງປະເທດ.

**ມາດຕາ 5.** ຜູ້ຂໍອະນຸຍາດສ້າງຕັ້ງທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ຍັງບໍ່ທັນໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນ ໃຫ້ປະກອບທຶນຈົດທະບຽນ ແລະ ເງິນລົງທຶນຕ່ຳສຸດ ໃຫ້ຄົບຖ້ວນຕາມຈຳນວນທີ່ໄດ້ກຳນົດໃນມາດຕາ 1 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 6.** ທະນາຄານ ແຫ່ງ ສປປ ລາວ, ທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ພາກສ່ວນກ່ຽວຂ້ອງ ມີໜ້າທີ່ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ